ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍ່ແກ້ວ

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເລກທີ 015/ພຊສ-ບກ

ບໍ່ແກ້ວ,ລົງວັນທີ 15 OCT 2013

# ໃບຢັ້ງຢືນ

- ອີງຕາມ ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ ສພຊ ລົງວັນທີ 18 ທັນວາ 2012.
- ອີງຕາມ ດຳລັດ ຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 112/ນຍ, ລົງວັນທີ 16 ກຸມພາ 2010.
- ອີງຕາມ ໜັງສືສະເໜີຂອງ ພະແນກກະສິກຳ ແລະ ປ່າໄມ້ແຂວງ ໜ່ວຍງານຄຸ້ມຄອງໂຄງການ ພຄຊ ສະບັບເລກທີ 0664/ ພຄຊ.ບກ ລົງວັນທີ 30 ກັນຍາ 2013.

**ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງຕົກລົງ:**

1. ເຫັນດີຮັບຮອງ ເອົາບົດລາຍງານ ການສຶກສາສິ່ງແວດລ້ອມເບື້ອງຕົ້ນ ສະບັບ ເດືອນກຸມພາ 2013. ຂອງໂຄງການ ຊົນລະປະທານ ນ້ຳທາດ ເມືອງຜາອຸດົມ ແຂວງບໍ່ແກ້ວ.
2. ໃຫ້ຜູ້ພັດທະນາໂຄງການປະຕິບັດຕາມເງື່ອນໄຂດັ່ງນີ້:

ກ. ຮັບຜິດຊອບໂດຍກົງຕໍ່ການສຶກສາ ແລະ ຂໍ້ມູນທີ່ໄດ້ກຳນົດໄວ້ໃນບົດລາຍງານ ການສຶກສາສິ່ງແວດລ້ອມເບື້ອງຕົ້ນ ,ໃນກໍລະນີ ມີຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ເກີດຂື້ນ ທີ່ບໍ່ໄດ້ສຶກສາໄວ້ ໃນບົດລາຍງານດັ່ງກ່າວ ຜູ້ພັດທະນາໂຄງການຕ້ອງຮັບຜິດຊອບເພີ່ມເຕີມ ໃນການກຳນົດມາດຕະການຫຼຸດຜ່ອນ ແລະ ແກ້ໄຂບັນຫາເຫຼົ່ານັ້ນ ພ້ອມທັງຮັບປະກັນໃຫ້ມີງົບປະມານພຽງພໍ.

ຂ. ໃຫ້ເອົາໃຈໃສ່ເປັນພິເສດ ໃນການຈັດຕັ້ງປະຕິບັດຕາມມາດຕະການປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ເປັນຕົ້ນແມ່ນການກຳຈັດສິ່ງເສດເຫຼືອ, ບັນຫາການເຊາະເຈື່ອນຂອງດິນ, ຄຸນນະພາບນ້ຳ, ຄາບນ້ຳມັນເຄື່ອງ ແລະ ອື່ນໆ ຕ້ອງເຮັດໃຫ້ຖືກຕາມເຕັກນິກ, ກຳຈັດຢູ່ໃນຂອບເຂດທີ່ກຳນົດໄວ້ ແລະ ໃຫ້ມີຜົນກະທົບໜ້ອຍທີ່ສຸດ.

ຄ. ໄລຍະກໍ່ສ້າງ ແລະ ພາຍຫຼັງການກໍ່ສ້າງສຳເລັດ ເຈົ້າຂອງໂຄງການຕ້ອງປົວແປງ ແລະ ຟື້ນຟູສະພາບແວດລ້ອມຕ່າງໆ ທີ່ຖືກຜົນກະທົບຈາກການກໍ່ສ້າງ ໃຫ້ຄືນສູ່ສະພາບທີ່ສາມາດນຳໃຊ້ໄດ້.

ງ. ເຮັດບົດສະຫຼຸບລາຍງານປະຈຳ 3 ເດືອນ, 6 ເດືອນ ແລະ ປະຈຳປີ ກ່ຽວກັບການຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນ ແລະ ແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການ ສົ່ງໃຫ້ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງເພື່ອຊາບ.

ໃບຢັ້ງຢືນສະບັບນີ້ມີຜົນນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າພະແນກ ຊັບພະຍາກອນທຳມະຊາດ**

**ແລະ ສິ່ງແວດລ້ອມ**

ພະແນກ ຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ແຂວງບໍ່ແກ້ວ

ສົມພອນ ວັນນະສີ